# ພັນທະບັດອອມຊັບ

## ຂອງທະນາຄານແຫ່ງ ສປປ ລາວ

## BOL SAVING BOND

ເປີດຈຳໜ່າຍລະຫວ່າງ
ວັນທີ 01-31 ຕຸລາ 2019

**ຜູ້ມີສິດຊື້:** ບຸກຄົນ, ນິຕິບຸກຄົນສັນຊາດລາວ ແລະ ຜູ້ທີ່ມີຖິ່ນຖານຢູ່ ສປປ ລາວ; ຍົກເວັ້ນນິຕິບຸກຄົນໃນຮູບແບບ ຫຼື ມີສາຍພົວພັນກັບທະນາຄານທຸລະກິດທີ່ດຳເນີນການເຄື່ອນໄຫວທຸລະກິດຢູ່ ສປປ ລາວ.
**ວົງເງິນຊື້ຂັ້ນຕ່ຳສຸດ ແລະ ສູງສຸດ** : ວົງເງິນຊື້ຕ່ຳສຸດ 1.000 ໂດລາສະຫະລັດ (1ໃບ) ແລະ ວົງເງິນຊື້ສູງສຸດແມ່ນບໍ່ຈຳກັດ.



ຈ່າຍດອກເບ້ຍທຸກໆ 6 ເດືອນ
Interest Payment : Every 6 Months

| ອາຍຸ Maturity | ປີ Year | ດອກເບ້ຍ Interest | ຕໍ່ປີ per year |
|---|---|---|---|
| 1 | | 5% | |

ປະເພດໃບ: USD1.000 USD5.000 USD10.000



ຈ່າຍດອກເບ້ຍທຸກໆ 6 ເດືອນ
Interest Payment : Every 6 Months

| ອາຍຸ Maturity | ປີ Years | ດອກເບ້ຍ Interest | ຕໍ່ປີ per year |
|---|---|---|---|
| 3 | | 6% | |

ປະເພດໃບ: USD1.000 USD5.000 USD10.000



ຈ່າຍດອກເບ້ຍທຸກໆ 6 ເດືອນ
Interest Payment : Every 6 Months

| ອາຍຸ Maturity | ປີ Years | ດອກເບ້ຍ Interest | ຕໍ່ປີ per year |
|---|---|---|---|
| 5 | | 7% | |

ປະເພດໃບ: USD1.000 USD5.000 USD10.000

## ສອບຖາມລາຍລະອຽດເພີ່ມເຕີມໄດ້ທີ່:


ສຳນັກງານໃຫຍ່ : 021-263975, 021-213101
ສາຂາອຸດົມໄຊ : 081-211492
ສາຂາຊຽງຂວາງ : 020-55717881
ສາຂາຫຼວງພະບາງ : 071-260711
ສາຂາສະຫວັນນະເຂດ : 030-5488806
ສາຂາຈຳປາສັກ : 020-22262995

ທກຕລ BCEL: 021-213200 ຕໍ່ 113
ທພລ LDB: 021-213300 ຕໍ່ 03, ຕໍ່ 211
020-54444399

# ພັນທະບັດອອມຊັບ

## ທະນາຄານແຫ່ງ ສປປ ລາວ

## BOL SAVING BOND

ທະນາຄານແຫ່ງ ສປປ ລາວ

**ພັນທະບັດອອມຊັບ ເປັນສະກຸນເງິນໂດລາສະຫະລັດ**
**ຂອງ ທະນາຄານແຫ່ງ ສປປ ລາວ ງວດຄັ້ງວັນທີ 01 ຕຸລາ 2019**
**ວົງເງິນຈຳໜ່າຍລວມ 500 ລ້ານໂດລາ ສຫລ**
ວົງເງິນຊື້ຂັ້ນຕ່ຳສຸດ 1.000 ໂດລາ ສຫລ ແລະ ວົງເງິນຊື້ສູງສຸດແມ່ນບໍ່ຈຳກັດ

**ຖາມ: ພັນທະບັດອອມຊັບ ແມ່ນຫຍັງ?**
**ຕອບ:** ພັນທະບັດອອມຊັບ ແມ່ນເອກະສານຢັ້ງຢືນການຝາກເງິນ ເພື່ອເປັນສັນຍາວ່າຜູ້ອອກພັນທະບັດອອມຊັບ (ໃນກໍລະນີນີ້ແມ່ນທະນາຄານແຫ່ງ ສປປ ລາວ: ທຫລ) ຈະຈ່າຍດອກເບ້ຍໃຫ້ຜູ້ຖືຄອງພັນທະບັດອອມຊັບ (ຫຼື ຜູ້ທີ່ໄດ້ຊື້ພັນທະບັດອອມຊັບ) ຕາມລາຍລະອຽດຂໍ້ມູນທີ່ໄດ້ຂຽນໄວ້ໃນພັນທະບັດອອມຊັບ ແລະ ຜູ້ອອກພັນທະບັດອອມຊັບຈະໄຖ່ຖອນຄືນ (ຊື້ຄືນ) ພັນທະບັດອອມຊັບ ທີ່ໄດ້ຂາຍອອກໄປນັ້ນ ຈາກຜູ້ຖືຄອງພັນທະບັດອອມຊັບ ເມື່ອພັນທະບັດອອມຊັບນັ້ນຄົບອາຍຸຕາມວັນທີໄຖ່ຖອນພັນທະບັດອອມຊັບ ທີ່ໄດ້ຂຽນໄວ້ໃນໃບພັນທະບັດອອມຊັບນັ້ນໆ.

**ຖາມ: ຊື້ພັນທະບັດອອມຊັບ ທຫລ ເພື່ອຫຍັງ?**
**ຕອບ:** ການຊື້ພັນທະບັດອອມຊັບ ທຫລ ແມ່ນການລົງທຶນຮູບແບບໜຶ່ງ ທີ່ໃຫ້ຜົນຕອບແທນຄືການຝາກເງິນໄລຍະຍາວ ແຕ່ພັນທະບັດອອມຊັບ ທຫລ ຈະມີສະພາບຄ່ອງຫຼາຍກວ່າເງິນຝາກໄລຍະຍາວ ເນື່ອງຈາກໃນໄລຍະທີ່ຖືຄອງພັນທະບັດອອມຊັບຢູ່ ຖ້າຜູ້ຖືຄອງພັນທະບັດອອມຊັບ ທຫລ (ຜູ້ທີ່ໄດ້ຊື້ພັນທະບັດອອມຊັບ ທຫລ) ຫາກປະສົບບັນຫາດ້ານສະພາບຄ່ອງ ກໍສາມາດນຳໃຊ້ພັນທະບັດອອມຊັບ ທຫລ ທີ່ຕົນຖືຄອງຢູ່ເປັນຫຼັກຊັບຄ້ຳປະກັນທາງການເງິນໄດ້ ຕາມລະບຽບກົດໝາຍຂອງ ສປປ ລາວ ແລະ ພັນທະບັດອອມຊັບ ທຫລ ນີ້ກໍສາມາດປ່ຽນກຳມະສິດໃນການຖືຄອງໄດ້; ແຕ່ທະນາຄານແຫ່ງ ສປປ ລາວ ຈະບໍ່ໄຖ່ຖອນຄືນ (ຊື້ຄືນ) ພັນທະບັດອອມຊັບກ່ອນວັນຄົບກຳນົດໄຖ່ຖອນພັນທະບັດອອມຊັບ.

**ຖາມ: ທະນາຄານແຫ່ງ ສປປ ລາວ (ທຫລ) ແມ່ນທະນາຄານແນວໃດ?**
**ຕອບ:** ທະນາຄານແຫ່ງ ສປປ ລາວ (ທຫລ) ແມ່ນທະນາຄານກາງຂອງປະເທດສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ມີໜ້າທີ່ໃນການຄຸ້ມຄອງມະຫາພາກດ້ານເງິນ, ຄຸ້ມຄອງສະຖາບັນການເງິນ (ປະກອບມີທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ) ແລະ ຄຸ້ມຄອງລະບົບການຊຳລະ.

**ຖາມ: ປົກກະຕິ ທຫລ ເພິ່ນຮັບຝາກເງິນ ແລະ ປ່ອຍກູ້ໃຫ້ບຸກຄົນທົ່ວໄປບໍ່?**
**ຕອບ:** ຕາມພາລະບົດບາດແລ້ວ ທຫລ ຈະບໍ່ໄດ້ເຮັດໜ້າທີ່ບໍລິການລູກຄ້າ ຄືກັບບັນດາທະນາຄານທຸລະກິດ ທີ່ມວນຊົນທົ່ວໄປຄຸ້ນເຄີຍ. ໜ້າທີ່ໜຶ່ງຂອງ ທຫລ ແມ່ນການຄຸ້ມຄອງທະນາຄານທຸລະກິດທີ່ບັນດາທ່ານ ໄປໃຊ້ບໍລິການ ຫຼື ເວົ້າໄດ້ວ່າເປັນທະນາຄານຂອງທະນາຄານ ແລະຂອງລັດຖະບານ ຕາມກົດໝາຍ ວ່າດ້ວຍທະນາຄານແຫ່ງ ສປປ ລາວ.

**ຖາມ: ພັນທະບັດອອມຊັບ ທຫລ ຈະສາມາດຊື້ດ້ວຍເງິນກີບໄດ້ບໍ່?**
**ຕອບ:** ພັນທະບັດອອມຊັບ ທຫລ ນີ້ເປັນສະກຸນເງິນໂດລາສະຫະລັດ ຕ້ອງຊື້ດ້ວຍເງິນໂດລາສະຫະລັດ ເທົ່ານັ້ນ.

## ພັນທະບັດອອມຊັບ ທຫລ

**ອາຍຸ 1 ປີ, ອັດຕາດອກເບ້ຍ 5% ຕໍ່ປີ**
ວົງເງິນຈຳໜ່າຍ 100 ລ້ານໂດລາ ສຫລ,
ມີ 3 ປະເພດມູນຄ່າ: 1.000 ໂດລາ ສຫລ,
5.000 ໂດລາ ສຫລ ແລະ 10.000 ໂດລາ ສຫລ

**1 ປີ**
**5% ຕໍ່ປີ**




## ພັນທະບັດອອມຊັບ ທຫລ

**ອາຍຸ 3 ປີ, ອັດຕາດອກເບ້ຍ 6% ຕໍ່ປີ**
ວົງເງິນຈຳໜ່າຍ 150 ລ້ານໂດລາ ສຫລ,
ມີ 3 ປະເພດມູນຄ່າ: 1.000 ໂດລາ ສຫລ,
5.000 ໂດລາ ສຫລ ແລະ 10.000 ໂດລາ ສຫລ

**3 ປີ**
**6% ຕໍ່ປີ**




## ພັນທະບັດອອມຊັບ ທຫລ

**ອາຍຸ 5 ປີ, ອັດຕາດອກເບ້ຍ 7% ຕໍ່ປີ**
ວົງເງິນຈຳໜ່າຍ 250 ລ້ານໂດລາ ສຫລ,
ມີ 3 ປະເພດມູນຄ່າ: 1.000 ໂດລາ ສຫລ,
5.000 ໂດລາ ສຫລ ແລະ 10.000 ໂດລາ ສຫລ

**5 ປີ**
**7% ຕໍ່ປີ**




- **ຄຸນລັກສະນະຂອງໃບພັນທະບັດອອມຊັບ ທຫລ:** ໃບພັນທະບັດອອມຊັບ ທຫລ ພິມດ້ວຍເຈ້ຍຄຸນະພາບດີ ຜະລິດຈາກຝ້າຍ 100%, ມີຄວາມແຕກຕ່າງກັບເຈ້ຍທົ່ວໄປ ເມື່ອເອົາມືສຳພັດຈະຮູ້ສຶກຫຍາບ ແລະ ຊາ,ມີຄວາມທົນທານຕໍ່ສະພາບອາກາດປຽກຊຸ່ມ; ມີຮູບພາພະທາດຫຼວງ ແລະ ເສັ້ນນິລະໄພຝັງຢູ່ໃນເນື້ອເຈ້ຍ ເມື່ອຍົກໃສ່ແສງສະຫວ່າງ ຈະເຫັນໄດ້ຢ່າງຊັດເຈນ ທັງດ້ານໜ້າ ແລະ ດ້ານຫຼັງ.

- **ການສົ່ງມອບພັນທະບັດອອມຊັບ ທຫລ:** ຜູ້ຈຳໜ່າຍຫຼັກ ແລະ ຕົວແທນຈຳໜ່າຍ ຈະສົ່ງມອບໃບພັນທະບັດອອມຊັບ ທຫລ ໃຫ້ຜູ້ມາຊື້ ພາຍຫຼັງຜູ້ຊື້ສຳເລັດການສະເໜີຂໍຊື້ ແລະ ຊຳລະຄ່າພັນທະບັດອອມຊັບ ທຫລ ຄົບຖ້ວນສົມບູນ.

- **ການຮັບຝາກພັນທະບັດອອມຊັບ ທຫລ:** ກົມບໍລິການທະນາຄານຂອງ ທຫລ ໃຫ້ບໍລິການຮັບຝາກພັນທະບັດອອມຊັບ ທຫລ ໂດຍບໍ່ຮຽກເກັບຄ່າທຳນຽມໃນການຮັບຝາກ ເພື່ອອຳນວຍຄວາມສະດວກໃຫ້ໃນກໍລະນີຜູ້ຖືຄອງພັນທະບັດອອມຊັບ ທຫລ ບໍ່ຕ້ອງການເກັບຮັກສາພັນທະບັດອອມຊັບ ທຫລ ໄວ້ເອງ.

- **ທຸລະກຳໃນຕະຫຼາດຂັ້ນສອງ:** ພັນທະບັດອອມຊັບ ທຫລ ນີ້ ບໍ່ສາມາດນຳໃຊ້ເປັນຜະລິດຕະພັນຊື້-ຂາຍໃນຕະຫຼາດຂັ້ນສອງໃນລະບົບຂອງທະນາຄານແຫ່ງ ສປປ ລາວ (ທຸລະກຳຕະຫຼາດເປີດ) ໄດ້ ແຕ່ສາມາດປ່ຽນກຳມະສິດໃນການຖືຄອງ ແລະ ນຳໃຊ້ເປັນເອກະສານທາງການເງິນ ທີ່ສາມາດນຳໃຊ້ ເປັນຫຼັກຊັບຄໍ້າປະກັນໄດ້ຕາມກົດໝາຍຂອງ ສປປ ລາວ.

- **ການປ່ຽນກຳມະສິດພັນທະບັດອອມຊັບທຫລ:** ທຸກຄັ້ງທີ່ມີການປ່ຽນກຳມະສິດຜູ້ຊື້ພັນທະບັດອອມຊັບ ທຫລ ໃນເບື້ອງຕົ້ນ ຫຼື ຜູ້ ທີ່ມີສິດໃນການຖືຄອງພັນທະບັດອອມຊັບ ທຫລ ໃນເວລານັ້ນ ແລະ ພາກສ່ວນກ່ຽວຂ້ອງ ຕ້ອງເຂົ້າມາພົວພັນເພື່ອແຈ້ງໃຫ້ ກົມບໍລິການທະນາຄານຂອງ ທຫລ ຫຼື ແຈ້ງຜ່ານຕົວແທນ ຈຳໜ່າຍຊາບ ພາຍໃນ 15 ວັນລັດຖະການ ຫຼື ຕ້ອງເຮັດໜັງສື ແຈ້ງທີ່ຖືກຕ້ອງຕາມກົດໝາຍເປັນລາຍລັກອັກສອນ ໃຫ້ ກົມບໍລິການທະນາຄານຂອງ ທຫລ ຊາບ ພາຍໃນ 15 ວັນ ລັດຖະການ. ຜູ້ຖືຄອງພັນທະບັດອອມຊັບ ທຫລ ສາມາດປ່ຽນ ກຳມະສິດໃນການຖືຄອງພັນທະບັດອອມຊັບ ທຫລ ໃຫ້ແກ່ຜູ້ມີ ສິດຊື້ພັນທະບັດອອມຊັບ ທຫລ ງວດຄັ້ງວັນທີ 01 ຕຸລາ 2019 ອື່ນໄດ້ພາຍຫຼັງຜູ້ຖືຄອງພັນທະບັດອອມຊັບ ທຫລ ຖື ຄອງພັນທະບັດອອມຊັບ ທຫລ ຄົບ 25 ວັນລັດຖະການ ແລະ ກ່ອນຄົບມື້ກຳນົດໄຖ່ຖອນພັນທະບັດອອມຊັບ ທຫລ ທີ່ຕົນຖືຄອງ 25 ວັນ ລັດຖະການ.

- **ຂໍ້ຫ້າມສຳລັບພັນທະບັດອອມຊັບ ທຫລ:** ຫ້າມບໍ່ໃຫ້ມີການປອມແປງ, ຂີດຂ້ຳ, ລຶບ, ດັດແກ້ເນື້ອໃນ, ເຮັດໃຫ້ເປື້ອນ, ຈີກຂາດແກ່ພັນທະບັດອອມຊັບ ທຫລ. ຖ້າຫາກເກີດມີກໍລະນີໃດໜຶ່ງທີ່ກ່າວມານັ້ນກັບພັນທະບັດອອມຊັບ ທຫລ ຈະຖືວ່າແມ່ນການປອມແປງ-ການທຳລາຍພັນທະບັດອອມຊັບ ທຫລ; ຈະເຮັດໃຫ້ພັນທະບັດອອມຊັບ ທຫລ ນີ້ ສູນເສຍຄຸນຄ່າທັງໝົດ ແລະ ບໍ່ສາມາດນຳໃຊ້ເປັນເອກະສານທາງການເງິນຕາມລະບຽບກົດໝາຍໄດ້ອີກຕໍ່ໄປ; ພ້ອມກັນນັ້ນ, ຜູ້ທີ່ເຈດຕະນາເຮັດການປອມແປງ ຫຼື ທຳລາຍພັນທະບັດອອມຊັບ ທຫລ ຈະມີຄວາມຜິດຕາມລະບຽບກົດໝາຍຂອງ ສປປ ລາວ.

- **ກໍລະນີພັນທະບັດອອມຊັບ ທຫລ ມີການຕົກເຮ່ຍ/ເສຍຫາຍໂດຍບໍ່ເຈດຕະນາ**: ພາຍຫຼັງທີ່ໄດ້ຮັບການແຈ້ງຕົກເຮ່ຍ/ເສຍຫາຍໂດຍບໍ່ເຈດຕະນາ ຈາກຜູ້ມີສິດໃນການຖືຄອງພັນທະບັດອອມຊັບ ທຫລ ແລະ ມີການຢັ້ງຢືນຈາກອຳນາດການປົກຄອງ ແລະ ພາກສ່ວນກ່ຽວຂ້ອງແລ້ວ; ກົມບໍລິການທະນາຄານ ຂອງ ທຫລ ຈະອອກໃບຢັ້ງຢືນການຖືຄອງພັນທະບັດພິເສດໃຫ້ເພື່ອປ່ຽນແທນພັນທະບັດອອມຊັບ ທຫລ ທີ່ໄດ້ຖືກຕົກເຮ່ຍເສຍຫາຍໄປໂດຍບໍ່ໄດ້ເຈດຕະນາ ແລະ ພັນທະບັດອອມຊັບ ທຫລ ທີ່ກ່ຽວຂ້ອງຈະຖືກລຶບລ້າງ.

**ຜູ້ທີ່ມີສິດຊື້ພັນທະບັດອອມຊັບ ທຫລ ງວດຄັ້ງວັນທີ 01 ຕຸລາ 2019: ບຸກຄົນ, ນິຕິບຸກຄົນສັນຊາດລາວ ແລະ ຜູ້ທີ່ມີຖິ່ນຖານ ຢູ່ ສປປ ລາວ[1]; ຍົກເວັ້ນນິຕິບຸກຄົນໃນຮູບແບບ ຫຼື ມີສາຍພົວພັນກັບທະນາຄານທຸລະກິດທີ່ດຳເນີນການເຄື່ອນໄຫວທຸລະກິດ ຢູ່ ສປປ ລາວ.**

[1] ຜູ້ມີຖິ່ນຖານຢູ່ ສປປ ລາວ ໝາຍເຖິງ ບຸກຄົນ ຫຼື ນິຕິບຸກຄົນຕ່າງປະເທດ (ບຸກຄົນ/ບໍລິສັດ/ສາຂາຕ່າງປະເທດ) ທີ່ດຳເນີນກິດຈະກຳ ຫຼື ທຸລະກິດທາງເສດຖະກິດ ຊຶ່ງໄດ້ຮັບອະນຸຍາດ ແລະ ຈົດທະບຽນຖືກຕ້ອງຕາມກົດໝາຍຂອງ ສປປ ລາວ ເກີນ 01 ປີຂຶ້ນໄປ. ນອກຈາກນັ້ນ, ຍັງລວມເຖິງພະນັກງານການທູດລາວທີ່ໄປປະຈຳການຢູ່ຕ່າງປະເທດ, ນັກສຶກສາລາວທີ່ໄປສຶກສາຢູ່ຕ່າງປະເທດ, ຄົນລາວທີ່ເຮັດວຽກຢູ່ບັນດາອົງການຈັດຕັ້ງສາກົນ (ສະຖານທູດ, ກອງທຶນສາກົນ, ທະນາຄານໂລກ, ສະຫະປະຊາຊາດ, ທະນາຄານພັດທະນາອາຊີ ເປັນຕົ້ນ) ຢູ່ ສປປ ລາວ ແລະ ຕ່າງປະເທດ ແລະ ຄົນເຈັບສັນຊາດລາວ ທີ່ໄປປິ່ນປົວຢູ່ຕ່າງປະເທດເປັນໄລຍະເວລາເກີນ 01 ປີ.

**ຜູ້ເບີກຈ່າຍດອກເບ້ຍ ແລະ ໄຖ່ຖອນເງິນຕົ້ນ:**
ກົມບໍລິການທະນາຄານຂອງທະນາຄານແຫ່ງ ສປປ ລາວ

## ການເບີກຈ່າຍດອກເບ້ຍ:

ເບີກຈ່າຍດອກເບ້ຍໃນທຸກໆ 06 ເດືອນ (02 ຄັ້ງຕໍ່ປີ) ຂອງແຕ່ລະປີ ຈົນເຖິງມື້ຄົບກຳນົດໄຖ່ຖອນ, ຊຶ່ງມີລາຍລະອຽດດັ່ງຕາຕະລາງລຸ່ມນີ້:

| ປີ | ຄັ້ງທີ | ວັນ, ເດືອນ, ປີ ເບີກຈ່າຍດອກເບ້ຍພັນທະບັດອອມຊັບ ທຫລ ງວດຄັ້ງວັນທີ 01 ຕຸລາ 2019 | | |
|---|---|---|---|---|
| | | ອາຍຸ 01 ປີ | ອາຍຸ 03 ປີ | ອາຍຸ 05 ປີ |
| 2020 | 01 | 01 ເມສາ 2020 | 01 ເມສາ 2020 | 01 ເມສາ 2020 |
| | 02 | 01 ຕຸລາ 2020 | 01 ຕຸລາ 2020 | 01 ຕຸລາ 2020 |
| 2021 | 01 | | 01 ເມສາ 2021 | 01 ເມສາ 2021 |
| | 02 | | 01 ຕຸລາ 2021 | 01 ຕຸລາ 2021 |
| 2022 | 01 | | 01 ເມສາ 2022 | 01 ເມສາ 2022 |
| | 02 | | 03 ຕຸລາ 2022 | 03 ຕຸລາ 2022 |
| 2023 | 01 | | | 03 ເມສາ 2023 |
| | 02 | | | 02 ຕຸລາ 2023 |
| 2024 | 01 | | | 01 ເມສາ 2024 |
| | 02 | | | 01 ຕຸລາ 2024 |

## ວັນ, ເດືອນ, ປີ ຄົບກຳນົດໄຖ່ຖອນ:

ພັນທະບັດອອມຊັບ ທຫລ ນີ້ ແມ່ນບໍ່ສາມາດໄຖ່ຖອນເງິນຕົ້ນກ່ອນຮອດມື້ຄົບກຳນົດໄຖ່ຖອນ, ສາມາດໄຖ່ຖອນເງິນຕົ້ນໄດ້ຕາມມື້ຄົບກຳນົດໄຖ່ຖອນ ດັ່ງນີ້:

1. ສຳລັບພັນທະບັດອອມຊັບ ທຫລ ອາຍຸ 01 ປີ,
   ມື້ຄົບກຳນົດໄຖ່ຖອນ ແມ່ນ: ວັນທີ 01 ຕຸລາ ປີ 2020;
2. ສຳລັບພັນທະບັດອອມຊັບ ທຫລ ອາຍຸ 03 ປີ,
   ມື້ຄົບກຳນົດໄຖ່ຖອນ ແມ່ນ: ວັນທີ 03 ຕຸລາ ປີ 2022;
3. ສຳລັບພັນທະບັດອອມຊັບ ທຫລ ອາຍຸ 05 ປີ,
   ມື້ຄົບກຳນົດໄຖ່ຖອນ ແມ່ນ: ວັນທີ 01 ຕຸລາ ປີ 2024.

**ໄລຍະເວລາເປີດຈຳໜ່າຍພັນທະບັດອອມຊັບ ທຫລ :**
ລະຫວ່າງວັນທີ 01-31 ຕຸລາ 2019
ໃນເວລາ 08:30 ໂມງ ຫາ 14:30 ໂມງ.

ທະນາຄານແຫ່ງ ສປປ ລາວ

**ຕິດຕໍ່ສອບຖາມຂໍ້ມູນເພີ່ມເຕີມ:** 021 213101

**ຜູ້ຈຳໜ່າຍຫຼັກ:**

**ກົມບໍລິການທະນາຄານຂອງ ທຫລ**
ເບີໂທ: 021 263 975; ແຟັກ: 021 263 044
www.bol.gov.la

**ຕົວແທນຈຳໜ່າຍ:**

**ສາຂາ ຂອງ ທຫລ ປະຈຳພາກເໜືອ ແຂວງອຸດົມໄຊ:**
ເບີໂທ: 081 211 492; ແຟັກ: 081 212 550.

**ສາຂາ ຂອງ ທຫລ ປະຈຳພາກເໜືອ ແຂວງຫຼວງພະບາງ:**
ເບີໂທ: 071 260 712, 071 260 711;
ແຟັກ: 071 260 719.

**ສາຂາ ຂອງ ທຫລ ປະຈຳພາກເໜືອ ແຂວງຊຽງຂວາງ:**
ເບີໂທ: 020 5571 7881; 020 2222 7137;
ແຟັກ: 061 260 030.

**ສາຂາ ຂອງ ທຫລ ປະຈຳພາກກາງ ແຂວງສະຫວັນນະເຂດ:**
ເບີໂທ: 030 548 8806; ແຟັກ: 041 260 305.

**ສາຂາ ຂອງ ທຫລ ປະຈຳພາກໃຕ້ ແຂວງຈຳປາສັກ:**
ເບີໂທ: 020 2226 2995; 020 2272 5888,
031 214 129; ແຟັກ: 031 214 129.

**ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ:**
ເບີໂທ: 021 213 200 ຕໍ່ 619, 021 213 200 ຕໍ່
113; ແຟັກ: 021 333 012. www.bcel.com.la

**ທະນາຄານພັດທະນາລາວ:**
ເບີໂທ: 021 213 300 ຕໍ່ 03 ຕໍ່ 211;
ແຟັກ: 021 222 506.www.ldblao.la

**ທະນາຄານສົ່ງເສີມກະສິກຳ:**
ເບີໂທ: 030 5057 453; 030 5057 450;
020 5444 4399; ແຟັກ: 021 713 060.
www.apb.com.la